**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການແຂວງ

ເລກທີ 807/ຫກ.ອປ

ອັດຕະປື, ວັນທີ 14 ຕຸລາ 2016

## ແຈ້ງການເພີ່ມເຕີມ

**ເຖິງ:** - ທ່ານຫົວໜ້າພະແນກ, ອົງການທຽບເທົ່າອ້ອມຂ້າງແຂວງ

- ຫົວໜ້າກອງບັນຊາການ ປກຊ, ກອງບັນຊາການ ປກສ ແຂວງ
- ເຈົ້າເມືອງ 5 ເມືອງ

**ເລື່ອງ:** ການສະເໜີຂໍປະຕິບັດໂຄງການ ແລະ ຂໍເງິນບໍລິຫານນອກແຜນ

- ອີງຕາມ ການນະເໜີບັນດາໂຄງການ ແລະ ຂໍງົບປະມານນອກແຜນຂອງບັນດາພະແນກການ, ອົງການ ຈຳນວນໜຶ່ງໃນໄລຍະຜ່ານມາ.
- ອີງຕາມ ການຄົ້ນຄວ້າ ແລະ ເຫັນດີເປັນເອກະພາບຂອງກອງປະຊຸມຄະນະປະຈຳພັກແຂວງ ຄັ້ງວັນທີ 11 ຕຸລາ 2016.

ຫ້ອງວ່າການແຂວງ ຂໍຖືເປັນກຽດແຈ້ງການຕາມການຕົກລົງ ແລະ ຊີ້ນຳຂອງກອງປະຊຸມຄະນະປະຈຳພັກແຂວງ ມາຍັງທ່ານ ເພື່ອຊາບວ່າ: ນັບແຕ່ນີ້ເປັນຕົ້ນໄປ ບັນດາການສະເໜີຂໍການຈັດຕັ້ງປະຕິບັດໂຄງການນອກແຜນຕ່າງໆ ແມ່ນໃຫ້ໄປຜ່ານພະແນກແຜນການ ແລະ ການລົງທຶນແຂວງ ເປັນຜູ້ຄົ້ນຄວ້ານຳສະເໜີສະພາປະຊາຊົນແຂວງຮັບຮອງ, ຖ້າເປັນການສະເໜີຂໍເງິນບໍລິຫານນອກແຜນແມ່ນໃຫ້ຍື່ນຜ່ານພະແນກການເງິນແຂວງເປັນຜູ້ຄົ້ນຄວ້ານຳສະເໜີສະພາປະຊາຊົນແຂວງຮັບຮອງ ( ຍົກເວັ້ນບາງໂຄງການທີ່ມີຄວາມຈຳເປັນແຂວງຈະພິຈາລະນາຊີ້ນຳເປັນກໍລະນີພິເສດ ).

ດັ່ງນັ້ນ, ຈິ່ງແຈ້ງການມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ຫ້ອງວ່າການ ປົກຄອງ

ທະນູໄຊ ບັນຊາລິດ

ບ່ອນນຳສົ່ງ:

| | |
|---|---|
| - ຄະນະປະຈຳພັກແຂວງ | 9 ສະບັບ ( ເພື່ອຊາບ ) |
| - ຄະນະຫ້ອງວ່າການແຂວງ | 6 ສະບັບ ( ເພື່ອຕິດຕາມ ) |
| - ເປົ້າໝາຍຂ້າງເທິງບ່ອນລະ | 1 ສະບັບ ( ເພື່ອປະຕິບັດ ) |
| - ຂະແໜງສັງລວມພັກ, ລັດ | 2 ສະບັບ ( ເພື່ອຕິດຕາມ ) |
| - ເກັບຮັກສາໄວ້ | 1 ສະບັບ |


ຫ້ອງວ່າການແຂວງ ຕັ້ງຢູ່ບ້ານໂພນສະຫວ່າງ ເມືອງສາມັກຄີໄຊ ແຂວງອັດຕະປື

ໂທລະສັບ/ແຟັກ 036 211373 ເວັບໄຊ www.attapeu.gov.la